ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

□□□□□ □□□□□

ລະບຽບການ

ວ່າດ້ວຍ

ການຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນແຫ່ງຊາດຫີນໝ້ານໜໍ່

ຂັ້ນເມືອງ, ກຸ່ມບ້ານ ແລະ ບ້ານ

ຄະນະກຳມະການຄຸ້ມຄອງຮ່ວມ

ເມືອງ ບໍ່ລະພາ, ພຶດສະພາ 2016

ສາລະບານ - Table of Content – Mục lục

ລະບຽບການວ່າດວ້ຍ ການຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນແຫ່ງຊາດຫີນໝາມໜໍ່ຂັ້ນເມືອງ, ກຸ່ມ ບ້ານ ແລະ ບ້ານ 5

ລະບຽບການວ່າດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາ ປ່າສະຫງວນແຫ່ງຊາດຫີນໝາມໜໍ່ຂັ້ນເມືອງ, ກຸ່ມ ບ້ານ ແລະ ບ້ານ 6

ຂໍ້ຕົກລົງ ຂອງເຈົ້າເມືອງໆ ປົວລະພາ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມ ຄອງຮ່ວມຂັ້ນເມືອງ 23

ຂໍ້ຕົກລົງ ຂອງປະທານຄະນະກຳມະການຊີ້ການຄຸ້ມຄອງຮ່ວມ ປ່າສະຫງວນແຫ່ງຊາດຫີນໝາມໜໍ່ຂັ້ນເມືອງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກອງເລຂານຸການ ຄກມ 29

Co- Management Regulation By-Law and HNN NPA Protection at District, Village Cluster and Village Levels 33

Co- Management Regulation By-Law and HNN NPA Protection at Village Cluster and Village Level 34

Decision of Boualapha District Governor on Terms of Reference of District Co-management Committee (TOR of DCMC) 47

Decision of Hin Nam No NPA District Co-Management Committee on the Terms of Reference of the Secretary 51

QUI CHẾ QUẢN LÝ BẢO VỆ KHU BẢO TỒN QUỐC GIA HIN NAM NO Ở CẤP XÃ VÀ CẤP BẢN 55

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ᩋᩋᩋᩋᩋ □□□ ᩈᩈᩈᩈᩈ

ລະບຽບການ

ວ່າດ້ວຍ

ການຄຸ້ມຄອງ ແລະ ປົກປັກຮັກສາ

ປ່າສະຫງວນແຫ່ງຊາດຫີນໝາມໜໍ່ຂັ້ນເມືອງ, ກຸ່ມບ້ານ ແລະ ບ້ານ

ຄະນະກຳມະການຄຸ້ມຄອງຮ່ວມ

ເມືອງ ບໍລະພາ, ພຶດສະພາ 2015

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ ຄຳມ່ວນ

ເມືອງ ບົວລະພາ

ເລກທີ: 01 /ຈມ.ບພ

ບົວລະພາ, ວັນທີ 7 ພຶດສະພາ 2015

ລະບຽບການ

ວ່າດ້ວຍ

ການຄຸ້ມຄອງ ແລະ ປົກປັກຮັກສາ

ປ່າສະຫງວນແຫ່ງຊາດຫີນໝາມໜໍ່ຂັ້ນເມືອງ, ກຸ່ມບ້ານ ແລະ ບ້ານ

- ອີງໃສ່ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ ລົງວັນທີ 24/12/ 2007.
- ອີງໃສ່ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງ ວັນທີ 24/12/2007
- ອີງຕາມກອງປະຊຸມປຶກສາຫາລື ຢູ່ຂັ້ນບ້ານ, ຂັ້ນກຸ່ມບ້ານ, ຂັ້ນເມືອງ ແລະ ຂັ້ນແຂວງ ກ່ຽວກັບ ລະບຽບການວ່າດ້ວຍການຄຸ້ມຄອງປ່າສະຫງວນແຫ່ງຊາດຫີນໝາມໜໍ່ ແຕ່ເດືອນ ພຶດສະພາ ຫາ ເດືອນຕຸລາ 2014 .
- ອີງຕາມບົດບັນທຶກກອງປະຊຸມທີ່ຫ້ອງປະຊຸມພະແນກ ກະສິກຳ ແລະ ປ່າໄມ້ແຂວງ ຄັ້ງວັນທີ 30 ກັນຍາ 2014.

ເພື່ອເຮັດໃຫ້ຊັບພະຍາກອນທຳມະຊາດ ແລະ ສັດນ້ຳ-ສັດປ່າ, ຊີວະນາໆພັນ ແລະ ສິ່ງແວດ ລ້ອມໃນເຂດປ່າສະຫງວນແຫ່ງຊາດຫີນໝາມໜໍ່ທີ່ມີຢູ່ໃນປະຈຸບັນໄດ້ຮັບການຄຸ້ມຄອງ ແລະ ປົກ

ປົກຮັກສາ, ຟື້ນຟູບູລະນະ,ຂະຫຍາຍພັນຕາມທຳມະຊາດໃຫ້ອຸດົມຮັ່ງມີ ແລະ ນຳໃຊ້ຢ່າງຍືນນານ ຕະຫຼອດໄປ. ພ້ອມທັງເປັນການກະຕຸກຊຸກຍູ້ໃຫ້ປະຊາຊົນບັນດາເຜົ່າ ແລະ ອົງການຈັດຕັ້ງທຸກ ຂັ້ນໄດ້ປະກອບສ່ວນເຂົ້າໃນການປົກປັກຮັກສາປ່າໄມ້, ທີ່ດິນປ່າ ໄມ້, ສັດນ້ຳ-ສັດປ່າ, ຊີວະນາໆ ພັນ ແລະ ສິ່ງ ແວດລ້ອມຢ່າງຕັ້ງໜ້າ, ຖືກຕ້ອງ ແລະ ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລັດຖະບານ ແລະ ເນື້ອໃນຂອງກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ແລະ ລະບຽບການວ່າດ້ວຍຄຸ້ມຄອງປ່າສະຫງວນແຫ່ງຊາດ.

ເຈົ້າເມືອງ ເມືອງບໍລະພາ ອອກລະບຽບການ

ໝວດທີ 01

ຫຼັກການທົ່ວໄປ

ມາດຕາ 01: ຈຸດປະສົງ

ຈຸດປະສົງຂອງລະບຽບການວ່າດ້ວຍການຄຸ້ມຄອງປ່າສະຫງວນແຫ່ງຊາດຫີນໝາມໝໍ່ສະບັບ ນີ້ເພື່ອແນ່ໃສ່:

1. ກຳນົດລະບຽບການ, ຫຼັກການ ແລະ ມາດຕະການຕ່າງໆໃນການຄຸ້ມຄອງນຳໃຊ້ປ່າໄມ້, ທີ່ດິນ ປ່າໄມ້, ສັດນ້ຳ-ສັດປ່າ ແລະ ເຄື່ອງປ່າຂອງດົງທຸກປະເພດ, ກຳນົດສິດ ແລະ ພັນທະຂອງປະ ຊາຊົນຕໍ່ການປົກປັກຮັກສາປ່າສະຫງວນແຫ່ງຊາດຫີນໝາມໝໍ່ໃຫ້ມີຄວາມຍືນຍົງ.
2. ສົ່ງເສີມໃຫ້ປະຊາຊົນບັນດາເຜົ່າທີ່ເຄີຍດຳລົງຊີວິດຕິດພັນກັບການນຳໃຊ້ຊັບພະຍາກອນປ່າໄມ້, ສັດນ້ຳ-ສັດປ່າ ໄດ້ເປັນເຈົ້າການ ແລະ ມີສ່ວນຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ, ຟື້ນຟູບູ ລະນະໃຫ້ນັບມື້ເພີ່ມຂຶ້ນ ແລະ ນຳໃຊ້ປະໂຫຍດຈາກຊັບພະຍາກອນດັ່ງກ່າວຢ່າງຍືນຍົງ, ສ້າງ ຈິດສຳນຶກໃຫ້ປະຊາຊົນພາຍໃນບ້ານມີຄວາມຮັບຮູ້ວ່າໂຕເອງເປັນເຈົ້າການທີ່ແທ້ຈິງໃນການ ຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນແຫ່ງຊາດຫີນໝາມໝໍ່ ທັງນີ້, ກໍເພື່ອເຮັດໃຫ້ຊັບພະ ຍາກອນທຳມະຊາດທີ່ນອນໃນຂອບເຂດຂອງບ້ານຕົນເອົ້າສະເພາະປ່າສະຫງວນແຫ່ງຊາດຫີນ ໝໍ່ເອົ້າລວມ, ໃຫ້ກາຍເປັນເຂດທີ່ອຸດົມສົມບູນໄປດ້ວຍຊີວະນາໆພັນ, ລະບົບນິເວດ, ທິວທັດ ທຳມະຊາດທີ່ສວຍສົດງົດງາມຢູ່ໃນອັນດັບຕົ້ນໆຂອງຊາດ, ພາກພື້ນ ແລະ ໂລກ.

3. ຮັບຮອງສິດເປັນເຈົ້າຂອງປະຊາຊົນໃນການຊົມໃຊ້ຊັບພະຍາກອນທຳມະຊາດຕາມຮີດຄອງປະເພນີທີ່ເຄີຍໄດ້ປະຕິບັດກັນມາແຕ່ບູຮານນະການໃຫ້ສອດຄອງກັບລະບຽບກົດໝາຍທີ່ວາງອອກ.
4. ສ້າງໃຫ້ທຸກພາກສ່ວນໃນສັງຄົມບໍ່ວ່າບຸກຄົນ, ນິຕິບຸກຄົນ, ລວມໝູ່ໄດ້ຮັບຮູ້ເຖິງລະບຽບໃນການຄຸ້ມຄອງປ່າສະຫງວນແຫ່ງຊາດຫີນໝາມໝໍ່. ພ້ອມທັງປົກປັກຮັກສາສິ່ງແວດລ້ອມ, ພັດທະນາຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນເທື່ອລະກ້າວ.

ມາດຕາ 02: ຂອບເຂດການນຳໃຊ້.

ລະບຽບສະບັບນີ້ນຳໃຊ້ໃນສະເພາະຈຸດປະສົງທີ່ໄດ້ລະບຸໄວ້ໃນມາດຕາ 01 ທີ່ນອນຢູ່ໃນເຂດການຄຸ້ມຄອງປ່າສະຫງວນແຫ່ງຊາດ ຫີນໝາມໝໍ່.

ມາດຕາ 03: ພັນທະໃນການຄຸ້ມຄອງ, ປົກປັກຮັກສາ ສັດນ້ຳ-ສັດປ່າ, ຊີວະນາໆພັນ ແລະ ສິ່ງແວດລ້ອມ.

ບຸກຄົນ, ການຈັດຕັ້ງຂອງລັດ ແລະ ເອກະຊົນ ລ້ວນແຕ່ມີພັນທະໃນການປົກປັກຮັກສາຊັບພະຍາກອນທຳມະຊາດ ໂດຍສະເພາະປ່າໄມ້, ສັດນ້ຳ-ສັດປ່າ, ຊີວະນາໆພັນ ແລະ ສິ່ງແວດລ້ອມ.

ມາດຕາ 04: ອະທິບາຍສັບສະເພາະ.

1. ປ່າສະຫງວນແຫ່ງຊາດຫີນໝາມໝໍ່ແມ່ນປ່າສະຫງວນທີ່ໄດ້ຖືກຮັບຮອງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 164/ນຍ, ລົງວັນທີ 29/10 /1993 ມີເນື້ອທີ່ 82,000 ເຮັກຕາ ຕັ້ງຢູ່ ເມືອງບໍລະພາ ແຂວງ ຄຳມ່ວນ.
2. ເຂດຫວງຫ້າມເດັດຂາດ: ແມ່ນເຂດທີ່ກຳນົດໄວ້ເພື່ອເປັນບ່ອນແຜ່ພັນ ແລະ ບ່ອນລີ້ຊ້ອນຂອງສັດປ່າປະກອບມີ 02 ເຂດ: ເຂດອະນຸລັກພັນສັດປ່ານ້ຳຂຸມ, ມີເນື້ອທີ່ປະມານ 3,600 ເຮັກຕາ ແລະ ເຂດອະນຸລັກພັນສັດປ່າຂຸນກະອານ, ມີເນື້ອທີ່ 3,800 ເຮັກຕາ.
3. ເຂດຫວງຫ້າມຕາມລະດູການ: ແມ່ນເຂດທີ່ກຳນົດໄວ້ເປັນບ່ອນແຜ່ພັນ ແລະ ບ່ອນລີ້ຊ້ອນຂອງສັດປ່າໃນລະດູແຜ່ພັນຄື: ເຂດກອນນອງ, ໜອງບຸ່ນ, ກອນພະຍາ, ພະນັງຕົກ ແລະ ຕະປ້າຍ, ມີເນື້ອທີ່ປະມານ 13,888 ເຮັກຕາ ແມ່ນຫວງຫ້າມເລີ່ມແຕ່ວັນທີ 01 ກໍລະກົດ ຫາ 30 ຕຸລາ.

4. ເຂດຫວງຫ້າມເພື່ອການທ່ອງທ່ຽວ: ແມ່ນເຂດທີ່ກຳນົດໄວ້ ເພື່ອເປັນບ່ອນທ່ອງທ່ຽວປະກອບ ມີ 03 ເຂດຄື: ຖ້ຳນ້ຳຫຼອດເຊບັ້ງໄຟ ເຂດໜອງປ໋ຽ, ກວນເກ ເຂດບ້ານດຸ ແລະ ພູເຈ໋ຍ ບ້ານ ໜອງບົວ.
5. ເຂດຄຸ້ມຄອງທົ່ວໄປ: ແມ່ນເຂດອື່ນໆຢູ່ໃນເຂດປ່າສະຫງວນແຫ່ງຊາດຫີນໝໍ່ ແຕ່ບໍ່ໄດ້ກຳນົດ ເຂົ້າໃນບັນດາເຂດຂັ້ນເທິງ.
6. ສັດນ້ຳ-ສັດປ່າ: ແມ່ນສັດທຸກຊະນິດທີ່ເກີດ, ຈະເລີນເຕີບໂຕ ແລະ ຂະຫຍາຍພັນຕາມທຳມະ ຊາດເຊິ່ງປະກອບດ້ວຍ: ສັດລ້ຽງລູກດ້ວຍນົມ, ສັດນ້ຳ, ສັດເລືອຄານ, ສັດເຄິ່ງບົກເຄິ່ງນ້ຳ, ນົກ ທຸກຊະນິດ ແລະ ແມງໄມ້ທຸກຊະນິດ.
7. ສັດຫວງຫ້າມ, ສັດຄຸ້ມຄອງ, ສັດທົ່ວໄປ ແມ່ນສັດທີ່ກຳນົດໄວ້ໃນບັນຊີ 01, 02, 03 (ມີເອ ກະສານຕິດຂັດທ້າງຫຼັງ).
8. ການຫາສັດນ້ຳ ແລະ ລ່າສັດປ່າ ແມ່ນການຈັບ, ຍິງ, ໃສ່ເບັດ, ໃສ່ມອງ, ຂ້າ, ໃສ່ແຮ້ວ, ລະ ເບີດ, ຢາເບື່ອ ແລະ ໄຟຊອດ.
9. ເຄື່ອງປ່າຂອງດົງ ແມ່ນຜະລິດຕະຜົນທີ່ເກີດຈາກທຳມະຊາດ ໃນນີ້ປະກອບດ້ວຍ: ເຄືອ, ຮາກ, ຫົວ, ເປືອກ, ໝາກ, ດອກ, ຢາງ, ນ້ຳມັນ, ນ້ຳເຜິ້ງ, ເຫັດ, ພືດກາຝາກ, ພືດຕົ້ນຕ່ຳ ແລະ ອື່ນໆ.
10. ການບຸກລຸກປ່າສະຫງວນ ແມ່ນການເຂົ້າປ່າສະຫງວນໂດຍບໍ່ໄດ້ຮັບອະນຸຍາດ.
11. ຄະນະກຳມະການຄຸ້ມຄອງຮ່ວມຂັ້ນບ້ານ ແມ່ນຄະນະກຳມະການທີ່ເຮັດວຽກໃນການຄຸ້ມຄອງ ປ່າສະຫງວນແຫ່ງຊາດຫີນໜາມໝໍ່ຢູ່ຂັ້ນບ້ານ.
12. ຄະນະກຳມະການຄຸ້ມຄອງຮ່ວມຂັ້ນເຂດ (ຂັ້ນກຸ່ມບ້ານ) ແມ່ນຄະນະກຳມະການທີ່ເຮັດ ວຽກໃນການຄຸ້ມຄອງປ່າສະຫງວນແຫ່ງຊາດ ຫີນໜາມໝໍ່ ຢູ່ຂັ້ນເຂດ.
13. ໜ່ວຍກວດກາລາດຕະເວນ ແມ່ນໜ່ວຍງານທີ່ເຄື່ອນໄຫວວຽກງານຄຸ້ມຄອງປ່າສະຫງວນ ແຫ່ງຊາດຫີນໜາມໝໍ່ ໂດຍສະເພາະແມ່ນການກວດກາ ແລະ ສະກັດກັ້ນການບຸກລຸກປ່າສະ ຫງວນ, ໄຟໄໝ້ປ່າ ແລະ ກິດຈະກຳອື່ນໆ ທີ່ມີຜົນກະທົບອັນບໍ່ດີຕໍ່ກັບປ່າສະຫງວນ.

ໝວດທີ 02

ການຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນ ແລະ ສັດນ້ຳສັດປ່າ

ມາດຕາ 05 : ການຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນ.

1. ການຄຸ້ມຄອງປ່າສະຫງວນ:

ການຄຸ້ມຄອງປ່າສະຫງວນແມ່ນການຄຸ້ມຄອງທຸກໆກິດຈະກຳທີ່ເຄື່ອນໄຫວກ່ຽວຂ້ອງ ແລະ ຕິດພັນກັບປ່າສະຫງວນເຊັ່ນ: ການສຶກສາຄົ້ນຄວ້າ, ການຖ່າຍທຳຕ່າງໆ, ການພັດທະນາການທ່ອງທ່ຽວ, ການພັດທະນາພື້ນຖານໂຄງລ່າງ.

2. ການປົກປັກຮັກສາປ່າສະຫງວນ

ການຄຸ້ມຄອງປ່າສະຫງວນ ແມ່ນການປົກປັກຮັກສາປ່າໄມ້ທີ່ໄດ້ກຳນົດ ເພື່ອຈຸດປະສົງໃນການອະນຸລັກທຳມະຊາດ, ປົກປັກຮັກສາພັນພືດ, ພັນສັດ, ລະບົບນິເວດປ່າໄມ້ ແລະ ສິ່ງຕ່າງໆທີ່ມີຄຸນຄ່າທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ, ການທ່ອງທ່ຽວ, ສິ່ງແວດລ້ອມ, ການສຶກສາ ແລະ ການຄົ້ນຄວ້າທົດລອງທາງວິທະຍາສາດ. ປ່າສະຫງວນແຫ່ງຊາດຫີນໝາມໝໍ່ແບ່ງອອກເປັນ 4 ເຂດຄື:

ເຂດຫວງຫ້າມເດັດຂາດ: ແມ່ນຫ້າມທຸກໆການດຳເນີນກິດຈະກຳຕ່າງໆເຊັ່ນ: ຫ້າມຕັດໄມ້ທຳລາຍປ່າ, ຫ້າມຂຸດຄົ້ນແຮ່ທາດ, ຫ້າມລ່າສັດທຸກຊະນິດ, ຫ້າມເກັບກູ້ເຄື່ອງປ່າຂອງດົງ, ຫ້າມຂຸດເຈາະ ຫຼື ຍົກຍ້າຍ ແລະ ເຄື່ອນຍ້າຍວັດຖຸທີ່ມີຄ່າ, ຫ້າມເຄື່ອນຍ້າຍພັນພືດ, ພັນສັດ, ຫ້າມດຳເນີນກິດຈະກຳ ແລະ ວຽກຕ່າງໆທາງດ້ານກະສິກຳ ແລະ ປ່າໄມ້, ຫ້າມການຕັ້ງບ້ານເຮືອນຕະຫຼອດຮອດການຫ້າມດຳເນີນກິດຈະກຳໂຄງການກໍ່ສ້າງ ຫຼື ພັດທະນາຕ່າງ. ຫ້າມບຸກຄົນ ຫຼື ການຈັດຕັ້ງໃດໆເຂົ້າໃນເຂດຫວງຫ້າມເດັດຂາດ, ຍົກເວັ້ນພະນັກງານ ແລະ ເຈົ້າໜ້າທີ່ໆທຳການກວດກາລາດຕະເວນ ເພື່ອປະຕິບັດໜ້າທີ່ໃນການຄຸ້ມຄອງ ແລະ ປົກປັກຮັກສາປ່າສະຫງວນແຫ່ງຊາດຫີນໝາມໝໍ່ເທົ່ານັ້ນ.

ເຂດຫວງຫ້າມຕາມລະດູການ: ແມ່ນເຂດທີ່ສາມາດເຂົ້າໄປນຳໃຊ້ໄດ້ ຍົກເວັ້ນແຕ່ອັນທີ 01 ກໍ ລະກົດ ຫາ 30 ຕຸລາ ຂອງທຸກໆປີ.

ເຂດຫວງຫ້າມເພື່ອທ່ອງທ່ຽວ: ແມ່ນເຂດທີ່ໄດ້ຈັດສັນໄວ້ເພື່ອການທ່ອງທ່ຽວ ໃນເຂດດັ່ງກ່າວນີ້ ການດຳເນີນທຸກໆ ກິດຈະກຳແມ່ນຕ້ອງຕິດພັນກັບການທ່ອງທ່ຽວເທົ່ານັ້ນ ຈຶ່ງສາມາດດຳເນີນການໄດ້.

ເຂດຄຸ້ມຄອງນຳໃຊ້: ແມ່ນເຂດອື່ນໆທີ່ນອນຢູ່ໃນປ່າສະຫງວນແຫ່ງຊາດຫີນໝາມໝໍ່ ແຕ່ບໍ່ໄດ້ກຳນົດເຂົ້າໃນບັນດາເຂດຂ້າງເທິງ ໃນເຂດດັ່ງກ່າວສາມາດນຳໃຊ້ດັ່ງນີ້:

- ເກັບກູ້ເຄື່ອງປ່າຂອງດົງ.
- ນຳໃຊ້ໄມ້ເພື່ອຮັບໃຊ້ພາຍໃນຄອບຄົວ ແລະ ປຸກສ້າງເຮືອນຕາມການເຫັນດີອະນຸມັດຕາມລະບຽບຫຼັກການຈາກອຳນາດການປົກຄອງບ້ານ, ເຈົ້າເມືອງ ແລະ ຫ້ອງການປ່າສະຫງວນແຫ່ງຊາດ ຫີນໝາມໝໍ່.
- ລ່າສັດນ້ຳ ແລະ ສັດປ່າ ປະເພດຄຸ້ມຄອງທີ່ອະນຸຍາດໃຫ້ລ່າຕາມລະດູການ ເພື່ອການບໍລິໂພກໃນຄອບຄົວເທົ່ານັ້ນ

ມາດຕາ 06: ການຄຸ້ມຄອງສັດນ້ຳ-ສັດປ່າ.

ສັດປ່າໃນເຂດປ່າສະຫງວນແຫ່ງຊາດຫີນໝາມໝໍ່ແບ່ງອອກເປັນ 03 ປະເພດຄື:

- ປະເພດສັດຫວງຫ້າມ
- ປະເພດສັດຄຸ້ມຄອງ
- ປະເພດສັດທົ່ວໄປ

ມາດຕາ 07: ການນຳໃຊ້ສັດນ້ຳ-ສັດປ່າ

- ສັດນ້ຳ-ສັດປ່າປະເພດຫວງຫ້າມ ແມ່ນບໍ່ສາມາດນຳໃຊ້ໄດ້ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກຂັ້ນເທິງໃນກໍລະນີພິເສດເຊັ່ນ: ເພື່ອການທ່ອງທ່ຽວ, ເພື່ອການຄົ້ນຄວ້າທາງດ້ານວິທະຍາສາດ.
- ສັດນ້ຳ-ສັດປ່າປະເພດຄຸ້ມຄອງ ແມ່ນສາມາດນຳໃຊ້ໄດ້ ເພື່ອມາໃຊ້ສອຍໃນຄອບຄົວຕາມປະເພນີແຕ່ສາມາດນຳໃຊ້ໄດ້ໃນລະດູການທີ່ຂັ້ນເທິງອານຸຍາດເທົ່ານັ້ນຄື: ວັນທີ 31 ຕຸລາ ຫາ ວັນທີ 30 ມີຖຸນາ ຂອງທຸກໆປີ.
- ສັດນ້ຳ-ສັດປ່າປະເພດທົ່ວໄປ ແມ່ນນຳໃຊ້ໄດ້ຕາມປະເພນີຄື: ດັ່ງຜ່ານມາ ແຕ່ຫ້າມນຳໃຊ້ທີ່ມີລັກສະນະແບບດັບສູນຖ້ານຳໃຊ້ເປັນສິນຄ້າ ແມ່ນຕ້ອງໄດ້ຮັບອານຸຍາດຈາກພາກສ່ວນທີ່ກ່ຽວຂ້ອງຕາມລະບຽບ ແລະ ກົດໝາຍ (ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ ສະບັບ ເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007).

ໝວດທີ 03

ວ່າດ້ວຍໂຄງປະກອບການຈັດຕັ້ງ, ມາດຖານເງື່ອນໄຂ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງຮ່ວມຂັ້ນກຸ່ມບ້ານ ແລະ ຂັ້ນບ້ານ

ມາດຕາ 08: ວ່າດ້ວຍເງື່ອນໄຂມາດຖານ, ໂຄງປະກອບ ແລະ ອາຍຸຂອງຄະນະກຳມະການຄຸ້ມຄອງຮ່ວມຂັ້ນກຸ່ມບ້ານ ແລະ ຂັ້ນບ້ານ.

1. ໂຄງປະກອບການຈັດຕັ້ງ, ມາດຖານເງື່ອນໄຂ ແລະ ອາຍຸຂອງຄະນະກຳມະການຄຸ້ມຄອງຮ່ວມຂັ້ນກຸ່ມບ້ານ (ຄກຂ)

1.1. ຄະນະກຳມະການຄຸ້ມຄອງຮ່ວມຂັ້ນກຸ່ມບ້ານ ປະກອບດ້ວຍ: ຫົວໜ້າ 01 ທ່ານ, ຮອງ 01 ທ່ານ ແລະ ຄະນະຕາມຄວາມເໝາະສົມ.

1.2. ເລຂາ ຫຼື ຮອງເລຂາໜ່ວຍພັກກຸ່ມບ້ານ ແມ່ນໄດ້ຮັບຕຳແໜ່ງເປັນຫົວໜ້າຄະນະ ຄກຂ ໂດຍອັດຕະໂນມັດແຕ່ທ່ານຜູ້ນັ້ນຕ້ອງໄດ້ມາຮ່ວມປະຊຸມໃນເວລາທີ່ມີການປ່ອນບັດຄັດເລືອກຕົວຈິງ.

1.3. ຮອງ ແລະ ຄະນະກຳມະການຄຸ້ມຄອງຮ່ວມຂັ້ນກຸ່ມບ້ານ ແມ່ນຜູ້ທີ່ເປັນຄະນະກຳມະການຄຸ້ມຄອງຮ່ວມຂັ້ນບ້ານທີ່ຂຶ້ນກັບໂດຍຜ່ານການຄັດເລືອກຢູ່ຂັ້ນກຸ່ມບ້ານ.

1.4. ອາຍຸການຂອງຄະນະກຳມະການຄຸ້ມຄອງຮ່ວມຂັ້ນກຸ່ມບ້ານ 03 ປີ

2. ໂຄງປະກອບການຈັດຕັ້ງ, ມາດຖານເງື່ອນໄຂ ແລະ ອາຍຸຂອງຄະນະກຳມະການຄຸ້ມຄອງຮ່ວມຂັ້ນບ້ານ (ຄກບ) :

2.1. ຄະນະກຳມະການຄຸ້ມຄອງຮ່ວມຂັ້ນບ້ານ ປະກອບດ້ວຍ: ຫົວໜ້າ 01 ທ່ານ, ຮອງ 01 ທ່ານ, ຄະນະຕາມຄວາມເໝາະສົມ.

2.2. ນາຍບ້ານ ຫຼື ຮອງ ນາຍບ້ານ.

2.3. ຕົວແທນຈາກໜ່ວຍງານກວດກາລາດຕະເວນ.

2.4. ຕົວແທນຈາກສະຫະພັນແມ່ຍິງບ້ານ.

2.5. ຕົວແທນຈາກກຸ່ມເກັບກູ້ ຄປດ ແລະ ກຸ່ມບໍລິການທ່ອງທ່ຽວ.

2.6. ອາຍຸການຂອງຄະນະກຳມະການຄຸ້ມຄອງຮ່ວມຂັ້ນບ້ານ 03 ປີ.

ມາດຕາ 09: ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງຮ່ວມຂັ້ນກຸ່ມບ້ານ, ຂັ້ນບ້ານ.

1. ສິດ ແລະ ໜ້າທີ່ ຂອງຄະນະກຳມະການຄຸ້ມຄອງຮ່ວມຂັ້ນກຸ່ມບ້ານ (ຄກຂ)

1.1 ວ່າດ້ວຍສິດ:

1.1.1. ມີສິດສະເໜີເປີດກອງປະຊຸມປຶກສາຫາລືກ່ຽວກັບວຽກງານຄຸ້ມຄອງປ່າສະຫງວນຂັ້ນກຸ່ມບ້ານ.

1.1.2. ມີສິດເຂົ້າຮ່ວມກອງປະຊຸມທາງດ້ານວິຊາການ, ເຂົ້າຮ່ວມຝຶກອົບຮົມທີ່ທາງໂຄງການ ຫຼື ອຳນາດການປົກຄອງຂັ້ນເມືອງຈັດຂຶ້ນ (ຖ້າຖືກເຊີນ) ແລະ ມີສິດປະກອບຄຳເຫັນຕ່າງໆ.

1.1.3. ມີສິດ-ກັກຕົວ ແລະ ປັບໄໝ ຜູ້ທີ່ກະທຳຜິດລະບຽບກົດໝາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນໂດຍສົມທົບກັບພະນັກງານວິຊາການທີ່ກ່ຽວຂ້ອງກັບປ່າສະຫງວນແຫ່ງຊາດຫີນໝາມໜ່ຢູ່ທ້ອງຖິ່ນຂອງຕົນແລ້ວປະກອບສຳນວນຄະດີສົ່ງຕໍ່ໃຫ້ຂັ້ນເມືອງ.

1.1.4. ສິດສັ່ງໂຈະ ຫຼື ຢຸດຕິການເກັບກູ້ເຄື່ອງປ່າຂອງດົງ, ຫາສັດນ້ຳ-ລ່າສັດປ່າ ແລະ ບຸກເບີກເນື້ອທີ່ເພື່ອທຳການຜະລິດກະສິກຳທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ.

1.2 ວ່າດ້ວຍໜ້າທີ່:

1.2.1. ເປັນເສນາທິການ ໂດຍກົງໃຫ້ແກ່ອຳນາດການປົກຄອງເມືອງໃນການຄຸ້ມຄອງ, ກວດກາ, ຕິດຕາມທຸກໆກິດຈະກຳທີ່ເຄື່ອນໄຫວກ່ຽວຂ້ອງກັບປ່າສະຫງວນ.

1.2.2. ນຳເອົາບັນດາເອກະສານ, ຂໍ້ຕົກລົງ, ລະບຽບກົດໝາຍທີ່ກ່ຽວຂ້ອງກັບປ່າສະຫງວນແຫ່ງຊາດຫີນໝາມໜ່ມາເຜີຍແຜ່ ແລະ ສຶກສາອົບຮົມໃຫ້ແກ່ພໍ່ແມ່ປະຊາຊົນໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

1.2.3. ສະກັດກັ້ນໄຟໄໝ້ປ່າ.

1.2.4. ຕ້ານ ແລະ ສະກັດກັ້ນການບຸກລຸກປ່າສະຫງວນໃນຂອບເຂດຂອງຕົນ.

1.2.5. ປົກປັກຮັກສາຊັບພະຍາກອນທຳມະຊາດ, ຊັບພະຍາກອນປ່າໄມ້, ທີ່ດິນ, ສັດນ້ຳ-ສັດປ່າໃຫ້ຍືນຍົງ.

1.2.6. ມີໜ້າທີ່ກວດກາ-ສະກັດກັ້ນຄົນພາຍນອກ ແລະ ພາຍໃນ ເຂົ້າອອກປ່າສະຫງວນແຫ່ງຊາດຫີນໝາມໜ່ ທີ່ຜິດຕໍ່ລະບຽບກົດໝາຍ.

1.2.7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງຕົນໃຫ້ອຳນາດການປົກຄອງຂັ້ນເມືອງ (ຕາມປົກກະຕິ ແລະ ບໍ່ປົກກະຕິ).

1.2.8. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກໃນການປະຕິບັດງານຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງ ແລະ ພົວພັນເຖິງການຄຸ້ມຄອງປ່າສະຫງວນແຫ່ງຊາດຫີນໝາມໝໍ່ໃນຂົງເຂດຄວາມຮັບຜິດຊອບຂອງຕົນ.

2. ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງຮ່ວມຂັ້ນບ້ານ (ຄກບ)

2.1 ວ່າດ້ວຍສິດ :

2.1.1 ສະເໜີເປີດກອງປະຊຸມປຶກສາຫາລືກ່ຽວກັບວຽກງານການຄຸ້ມຄອງປ່າສະຫງວນຂັ້ນບ້ານ.

2.1.2 ເຂົ້າຮ່ວມກອງປະຊຸມທາງດ້ານວິຊາການ, ເຂົ້າຮ່ວມຝຶກອົບຮົມທີ່ທາງໂຄງການ ຫຼື ອຳນາດການປົກຄອງຂັ້ນເມືອງຈັດຂຶ້ນ (ຖ້າຖືກເຊີນ) ແລະ ມີສິດປະກອບຄຳເຫັນຕ່າງໆ.

2.1.3 ມີສິດກັກຕົວ ແລະ ປັບໃໝຜູ້ທີ່ກະທຳຜິດກົດລະບຽບກົດໝາຍໂດຍການເຂົ້າຮ່ວມຂອງຄະນະກຳມະການຂັ້ນກຸ່ມບ້ານ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງກັບປ່າສະຫງວນແຫ່ງຊາດຫີນໝາມໝໍ່ຢູ່ທ້ອງຖິ່ນຕົນແລ້ວສົ່ງໃຫ້ອຳນາດການປົກຄອງເມືອງຕັດສິນລົງໂທດຕາມລະບຽບກົດໝາຍຂອງ ສປປ ລາວ.

2.1.4 ມີສິດສັ່ງໂຈະ ຫຼື ຢຸດຕິການເກັບກູ້ເຄື່ອງປ່າຂອງດົງ, ຫາສັດນ້ຳ-ລ່າສັດປ່າ ແລະ ບຸກເບີກເນື້ອທີ່ເພື່ອທຳການຜະລິດກະສິກຳທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍແລ້ວລາຍງານໃຫ້ເຂດກຸ່ມບ້ານຮັບຊາບພາຍໃນ 24 ຊົ່ວໂມງ.

2.2 ວ່າດ້ວຍໜ້າທີ່:

2.2.1 ເປັນເສນາທິການ ໂດຍກົງໃຫ້ແກ່ນາຍບ້ານ ແລະ ຄະນະກຳມະການຄຸ້ມຄອງຮ່ວມຂັ້ນກຸ່ມບ້ານໃນການຄຸ້ມຄອງ, ກວດກາ, ຕິດຕາມໃນທຸກໆກິດຈະກຳທີ່ກ່ຽວຂ້ອງ ແລະ ຕິດພັນກັບປ່າສະຫງວນແຫ່ງຊາດ ຫີນໝາມໝໍ່.

2.2.2 ນຳເອົາບັນດາເອກະສານ, ຂໍ້ຕົກລົງ, ລະບຽບກົດໝາຍທີ່ກ່ຽວຂ້ອງກັບປ່າສະຫງວນແຫ່ງຊາດຫີນໝາມໝໍ່ມາເຜີຍແຜ່ ແລະ ສຶກສາອົບຮົມພໍ່ແມ່ປະຊາຊົນໃນຂອບເຂດບ້ານຂອງຕົນ.

2.2.3 ສະກັດກັ້ນໄຟໄໝ້ປ່າ.

2.2.4 ສະກັດກັ້ນການບຸກລຸກປ່າສະຫງວນໃນຂອບເຂດຂອງຕົນ.

2.2.5 ປົກປັກຮັກສາຊັບພະຍາກອນທຳມະຊາດ, ຊັບພະຍາກອນປ່າໄມ້, ທີ່ດິນ, ສັດນ້ຳ-ສັດປ່າໃຫ້ຍືນຍົງ.

2.2.6 ກວດກາ-ສະກັດກັ້ນ ຄົນພາຍນອກ ແລະ ພາຍໃນ ເຂົ້າອອກປ່າສະຫງວນແຫ່ງຊາດ ຫີນໜາມໜໍ່ທີ່ຜິດຕໍ່ລະບຽບກົດໝາຍ.

2.2.7 ສະຫຼຸບ ແລະ ລາຍງານໃຫ້ຄະນະກຳມະການຄຸ້ມຄອງຮ່ອມຂັ້ນກຸ່ມບ້ານ(ເຂດ), ຂັ້ນເມືອງຢ່າງເປັນປົກກະຕິ 04 ຄັ້ງຕໍ່ປີ (ເດືອນ 03, 06, 09 ແລະ ເດືອນ 12) ແລະ ບໍ່ປົກກະຕິ (ອີງໃສ່ສະພາບການໃນຕົວຈິງ).

2.2.8 ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກໃນການປະຕິບັດງານຂອງພາກສ່ວນຕ່າງໆທີ່ກ່ຽວຂ້ອງ ແລະ ພົວພັນເຖິງການຄຸ້ມຄອງປ່າສະຫງວນແຫ່ງຊາດຫີນໜາມໜໍ່ໃນຂົງເຂດຄວາມຮັບຜິດຊອບຂອງຕົນ.

ໝວດທີ 04

ວ່າດ້ວຍຂໍ້ຫ້າມ

ມາດຕາ 10: ສຳລັບ ຄກຂ, ຄກບ ແລະ ການຈັດຕັ້ງທຸກພາກສ່ວນ ຢູ່ຂັ້ນບ້ານ ແລະ ກຸ່ມບ້ານ ມີ ບັນດາຂໍ້ຫ້າມດັ່ງລຸ່ມນີ້ :

1) ສວຍໃຊ້ໜ້າທີ່ຕຳແໜ່ງ ແລະ ຮັບສິນບົນເພື່ອຜົນປະໂຫຍດສ່ວນຕົວ.
2) ໃຊ້ສິດໜ້າທີ່ເກີນຂອບເຂດ ເຊິ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດຂອງປະຊາຊົນ.
3) ປະລະໜ້າທີ່ ແລະ ຄວາມຮັບຜິດຊອບຕໍ່ວຽກງານ ທີ່ການຈັດຕັ້ງມອບໝາຍໃຫ້.
4) ປອມແປງເອກະສານຂອງລັດ ເຊັ່ນ: ລາຍເຊັນ ແລະ ອື່ນໆ.
5) ໃຫ້ຄວາມຮ່ວມມື ອຳນວຍຄວາມສະດວກ ຫຼື ເອື້ອປະໂຫຍດໃຫ້ແກ່ບຸກຄົນ, ກຸ່ມຄົນ ໃນ ການຊື້-ຂາຍຊັບພະຍາກອນປ່າໄມ້, ສັດນ້ຳ-ສັດປ່າ ແບບຜິດກົດໝາຍ.
6) ຍ້າຍ ຫຼື ປ່ຽນແປງປ້າຍ, ຫຼັກເຂດແດນ ປ່າສະຫງວນ, ວັງສະຫງວນ ແລະ ອື່ນໆ.
7) ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ແລະ ນຳໃຊ້ມາດຕະການອື່ນໆ ທີ່ບໍ່ຖືກຕ້ອງຕາມກົດ ໝາຍ.
8) ມີໄວ້ໃນຄອບຄອງ, ເຄື່ອງຈັກຕັດໄມ້, ສັດປ່າປະເພດຫວງຫ້າມ ແລະ ເຄື່ອງມືຕ່າງໆ ກ່ຽວ ກັບການຜະລິດ ແລະ ນຳໃຊ້ໄມ້ທີ່ຜິດຕໍ່ລະບຽບກົດ ໝາຍ.
9) ພຶດຕິກຳອື່ນໆເຊິ່ງແມ່ນຂໍ້ຫ້າມ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍ ວ່າດ້ວຍສັດນ້ຳ-ສັດປ່າ.

ມາດຕາ 11 : ຂໍ້ຫ້າມສຳລັບປະຊາຊົນ .

ຫ້າມປະຊາຊົນມີພຶດຕິກຳດັ່ງລຸ່ມນີ້:

1) ບຸກລຸກ, ຖາກຖາງ, ບຸກເບີກ, ທຳລາຍປ່າໄມ້, ທີ່ດິນປ່າໄມ້ ໃນຂອບເຂດພື້ນທີ່ປ່າສະ ຫງວນໃນທຸກໆກໍລະນີ
2) ລ່າສັດປ່າ-ຫາສັດນ້ຳ ທີ່ມີລັກສະນະແບບດັບສູນ.
3) ລ່າສັດປ່າ ແລະ ມີສັດປ່າ ປະເພດຫວງຫ້າມໄວ້ໃນຄອບຄອງ.
4) ຂຸດຄົ້ນໄມ້ທຸກຊະນິດ ແລະ ເຄື່ອງປ່າຂອງດົງປະເພດຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ.

5) ເປັນສາຍ ຫຼື ເປັນຕົວແທນໃຫ້ກຸ່ມຄົນບໍ່ດີພາຍນອກໃນການລັກລອບ ແລະ ບຸກລຸກເຂົ້າໃນປ່າສະຫງວນ.

6) ເອົາຄວາມລັບຂອງ ຄກປ ແລະ ຄກຂ ອອກເປີດເຜີຍໃຫ້ກຸ່ມຄົນບໍ່ດີພາຍນອກຊາບ.

7) ພຶດຕິກຳອື່ນໆ ເຊິ່ງແມ່ນຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ.

ມາດຕາ 12 : ຂໍ້ຫ້າມສຳລັບການຈັດຕັ້ງ, ບຸກຄົນ ແລະ ນິຕິບຸກຄົນອື່ນໆ .

ຫ້າມການຈັດຕັ້ງ, ບຸກຄົນ ແລະ ນິຕິບຸກຄົນອື່ນໆ ດັ່ງລຸ່ມນີ້ :

1) ໃຊ້ສິດ ໜ້າທີ່ເກີນຂອບເຂດ, ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ, ເຈົ້າໜ້າທີ່ ຫຼື ຜູ້ອື່ນ.

2) ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ເພື່ອຜູ້ອື່ນ .

3) ຂຸດຄົ້ນໄມ້, ເກັບກູ້ເຄື່ອງປ່າຂອງດົງ, ລ່າສັດປ່າຫາສັດນ້ຳ ໂດຍບໍ່ໄດ້ຮັບອະນຸຍາດ.

4) ບຸກລຸກເຂົ້າປ່າສະຫງວນ ໂດຍບໍ່ໄດ້ຮັບອະນຸຍາດໃນທຸກໆກໍລະນີ.

5) ພຶດຕິກຳອື່ນໆເຊິ່ງແມ່ນຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍວ່າດ້ວຍສັດນ້ຳ-ສັດປ່າ.

ໝວດທີ 05

ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 13: ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ບໍລິສັດ ທີ່ມີຜົນງານດີເດັ່ນທີ່ໄດ້ປະກອບສ່ວນເຂົ້າໃນວຽກງານການຄຸ້ມຄອງ ແລະ ປົກປັກຮັກສາ ປ່າສະຫງວນແຫ່ງຊາດຫີນໝາມໜໍ່ ແມ່ນຈະໄດ້ຮັບການຍ້ອງຍໍ ແລະ ຮັບນະໂຍບາຍຕ່າງໆຈາກຂັ້ນເທິງຕາມຄວາມເໝາະສົມ.

ມາດຕາ 14: ມາດຕາການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ບໍລິສັດ ທີ່ໄດ້ກະທຳຜິດຕໍ່ລະບຽບການຄຸ້ມຄອງປ່າສະຫງວນແຫ່ງຊາດຫີນໝາມໜໍ່ທີ່ມີລັກສະນະເບົາບາງ ຫຼື ເປັນການກະທຳຜິດຄັ້ງທຳອິດທີ່ກໍ່ຜົນເສຍຫາຍບໍ່ເຖິງ 50,000 ກີບ, ຜູ້ກ່ຽວຈະຖືກກ່າວເຕືອນ, ສຶກສາອົບຮົມ ແລະ ບັນທຶກໄວ້ໃນຂັ້ນບ້ານ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ບໍລິສັດ ທີ່ໄດ້ກະທຳຜິດຕໍ່ລະບຽບການຄຸ້ມຄອງປ່າສະຫງວນແຫ່ງຊາດຫິນໜາມໜໍ່ເປັນການກະທຳຜິດຄັ້ງທຳອິດທີ່ກໍ່ຜົນເສຍຫາຍນັບແຕ່ 50,000 ກີບ ຫາ 500,000 ກີບ, ຜູ້ກ່ຽວຈະຖືກປັບໄໝສອງເທົ່າຂອງມູນຄ່າເສຍຫາຍ ພ້ອມທັງຮິບຂອງກາງ ແລະ ວັດຖຸຕ່າງໆທີ່ກ່ຽວຂ້ອງ ໃນການກະທຳຜິດ ແລະ ບັນທຶກໄວ້ໃນກຸ່ມບ້ານ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ບໍລິສັດ ທີ່ໄດ້ກະທຳຜິດຕໍ່ລະບຽບການຄຸ້ມຄອງປ່າສະຫງວນແຫ່ງຊາດຫິນໜາມໜໍ່ເປັນການກະທຳຜິດຄັ້ງທຳອິດທີ່ກໍ່ຜົນເສຍຫາຍນັບແຕ່ 500,000 ກີບ ຫາ 1,000,000 ກີບ ຫຼື ເປັນການກະທຳຜິດຄືກັບຫຍໍ້ໜ້າ 01, ຫຍໍ້ໜ້າ 02 ແຕ່ເປັນການກະທຳຜິດເປັນອາຈິນ, ຜູ້ກ່ຽວຈະຖືກປັບໄໝສອງເທົ່າຂອງມູນຄ່າເສຍຫາຍ ພ້ອມທັງຮິບຂອງກາງ ແລະ ວັດຖຸຕ່າງໆທີ່ກ່ຽວຂ້ອງໃນການກະທຳຜິດແລ້ວປະກອບສຳນວນຂໍ້ມູນຫຼັກຖານສົ່ງໃຫ້ຂັ້ນເມືອງ.

ນອກຈາກການກະທຳຜິດທີ່ມີລັກສະນະທີ່ກ່າວມາຂ້າງເທິງແລ້ວ ຍັງມີການກະທຳຜິດທີ່ຈະຕ້ອງໄດ້ປັບໄໝ ແລະ ດຳເນີນຄະດີດັ່ງລຸ່ມນີ້:

1. ການປັບໄໝຕໍ່ຜູ້ກະທຳຜິດທີ່ເຂົ້າປ່າສະຫງວນ ໂດຍບໍ່ໄດ້ຮັບອະນຸຍາດ:

1.1 ຄົນພາຍໃນທ້ອງຖິ່ນ (ຄົນລາວ):

ຄັ້ງທີ 1: ແມ່ນຈະຖືກປັບໄໝເປັນມູນຄ່າ 1,000,000 ກີບຕໍ່ຄົນຕໍ່ຄັ້ງ ພ້ອມທັງບັນທຶກໄວ້ໃນສຳນວນ.

ຄັ້ງທີ 2: ແມ່ນຈະຖືກປັບໄໝເປັນມູນຄ່າ 2,000,000 ກີບຕໍ່ຄົນຕໍ່ຄັ້ງພ້ອມທັງບັນທຶກໄວ້ໃນສຳນວນ.

ຄັ້ງທີ 3 : ຮິບຂອງກາງ, ອຸປະກອນຕ່າງໆຂອງການກະທຳຜິດ, ກັກຕົວຜູ້ກະທຳຜິດ ແລ້ວປະກອບສຳນວນຄະດີສົ່ງຕໍ່ໃຫ້ຂັ້ນເມືອງ ແລະ ຂັ້ນແຂວງ ເພື່ອດຳເນີນຄະດີຕາມລະບຽບກົດໝາຍ.

1.2 ຄົນພາຍນອກທ້ອງຖິ່ນ (ຄົນລາວ)

ຄັ້ງທີ 1 : ແມ່ນຈະຖືກປັບໄໝເປັນມູນຄ່າ 1,500,000 ກີບຕໍ່ຄົນຕໍ່ຄັ້ງ ພ້ອມທັງບັນທຶກໄວ້ໃນສຳນວນ.

ຄັ້ງທີ 2: ແມ່ນຈະຖືກປັບໄໝເປັນມູນຄ່າ 2,500,000 ກີບຕໍ່ຄົນຕໍ່ຄັ້ງພ້ອມທັງບັນທຶກໄວ້ໃນສຳນວນ.

ຄັ້ງທີ 3: ຮິບຂອງກາງ, ອຸປະກອນຕ່າງໆຂອງການກະທຳຜິດ, ກັກຕົວຜູ້ກະທຳຜິດ ແລ້ວ ປະກອບສຳນວນຄະດີສົ່ງຕໍ່ໃຫ້ຂັ້ນເມືອງ ແລະ ຂັ້ນແຂວງ ເພື່ອດຳເນີນຄະດີຕາມລະ ບຽບກົດໝາຍ.

1.3 ຄົນພາຍນອກ (ຄົນຕ່າງປະເທດ)

ຄັ້ງທີ 1: ແມ່ນຈະຖືກປັບໄໝເປັນມູນຄ່າ 500 ໂດລາຕໍ່ຄົນຕໍ່ຄັ້ງ.

ຄັ້ງທີ 2: ແມ່ນຈະຖືກປັບໄໝເປັນມູນຄ່າ 1,000 ໂດລາຕໍ່ຄົນຕໍ່ຄັ້ງ.

ຄັ້ງທີ 3: ຮິບຂອງກາງ, ອຸປະກອນຕ່າງໆຂອງການກະທຳຜິດ, ກັກຕົວຜູ້ກະທຳຜິດ ແລ້ວ ປະກອບສຳນວນຄະດີສົ່ງຕໍ່ໃຫ້ຂັ້ນເມືອງ ແລະ ຂັ້ນແຂວງ ເພື່ອດຳເນີນຄະດີຕາມ ລະບຽບກົດໝາຍ.

2. ການປັບໄໝຕໍ່ຊັບພະຍາກອນປ່າໄມ້ ແລະ ເຄື່ອງປ່າຂອງດົງ ແມ່ນອີງຕາມການແຈ້ງການຂອງ ກະຊວງອຸດສາຫະກຳການຄ້າໃນແຕ່ລະປີ.

3. ອັດຕາຄິດໄລ່ຂອງກາງປະເພດ/ຊະນິດ ປະເພດຕ່າງໆໃນການປັບໄໝມີລາຍລະອຽດຕໍ່ໄປນີ້:

ລ/ດ	ເນື້ອໃນ	ຫົວໜ່ວຍ	ຈຳນວນເງິນ (ກີບ)	ໝາຍເຫດ
ອຸປະກອນການກະທຳຜິດ				
1	ປືນ ທຸກຊະນິດ	ຄັ້ງ	3,000,000	
2	ແຮ້ວ	ດາງ	100,000	ຕ່ຳດາງ
3	ຍິງລະເບີດ	ຄັ້ງ	5,000,000	
4	ຈັກສະຕິ້ນ	ໜ່ວຍ	3,000,000	
5	ຈັກລ້າກແກ່	ອັນ	10,000,000	
6	ຂວານ,ພ້າ,ສິ່ວ,ເລື່ອຍ	ດວງ	100,000	ຕ່ຳດວງ
7	ອຸປະກອນສະກັດນ້ຳມັນຕ່າງໆ	ອັນ	1,000,000	ຕ່ຳອັນ
8	ຊ່ອດໄຟ (ໄຟຟ້າ,ໝໍ້ແບ່ງ, ໃຊ້ຢາເບືອ)	ຄັ້ງ	3,000,000	
ປະເພດສັດປ່າ				
9	ຂາແດງ, ບ່າງລ້ວາ	ໂຕ	1,000,000	
10	ຄຸ້ງ ຫຼື ໂຄ່ງ	ໂຕ	1,000,000	
11	ນົກກົກ, ນົກຍູງ	ໂຕ	3,000,000	
12	ກວາງ	ໂຕ	5.000,000	
13	ຟານ	ໂຕ	2,000.000	
14	ເຍືອງ	ໂຕ	4,000,000	
15	ປາຝາ	ໂຕ	2,000,000	
16	ເຕົ່າ	ໂຕ	200,000	
17	ໄກ່ຂວາ	ໂຕ	150,000	
18	ທະນີ	ໂຕ	1,500,000	
19	ຫຼົ່ນ	ໂຕ	5,000,000	
20	ງູເຫຼືອມ	ກິໂລ	250.000	
21	ງູຈົງອາງ	ກິໂລ	500.000	
22	ລົງວັງສະຫງວນ	ຄັ້ງ	3.000.000	
23	ການຖາງປ່າເຂດປ່າສະຫງວນ	ຄັ້ງ	ສົ່ງເມືອງ	ປະກອບຄະດີ
24	ຈູດປ່າ(ເຮັດໃຫ້ເກີດໄຟໄໝ້ປ່າ)	ຄັ້ງ	ສົ່ງເມືອງ	ປະກອບຄະດີ

ໝາຍເຫດ:

1) ໃນກໍລະນີສັດຕາຍຈະເຜົາຖິ້ມໂດຍຊ້ອງໜ້າທັງໝົດອຳນາດການປົກຄອງທ້ອງຖິ່ນ, ຄກບ ແລະ ຄະນະຄກຂ.

2) ໃນກໍລະນີສັດຍັງບໍ່ຕາຍຈະໄດ້ຈັດຕັ້ງຄະນະນຳໄປປ່ອຍຄືນສູ່ທຳມະຊາດທີ່ເຫັນວ່າມີຄວາມປອດໄພສູງ.

ໝວດທີ 06

ວ່າດ້ວຍແຫຼ່ງລາຍຮັບ ແລະ ການແບ່ງປັນລາຍຮັບ

ມາດຕາ 15 : ວ່າດ້ວຍແຫຼ່ງລາຍຮັບ

1. ງົບປະມານການຄຸ້ມຄອງ ແລະ ການປົກປັກຮັກສາປ່າສະຫງວນ.
2. ການປັບໄໝ.
3. ການຂາຍຂອງກາງທີ່ຮິບມາໄດ້.
4. ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ.
5. ການປະກອບສ່ວນຂອງບຸກຄົນ ແລະ ນິຕິບຸກຄົນ.

ມາດຕາ 16 : ວ່າດ້ວຍການແບ່ງປັນລາຍຮັບຈາກການປັບໄໝ.

ການແບ່ງປັນລາຍຮັບຈາກການປັບໄໝແມ່ນຫັກຄ່າສິ້ນເປືອງໃນການດຳເນີນຄະດີຕ່າງໆອອກແລ້ວແບ່ງເປັນ 5 ພວດ ລະອຽດລຸ່ມນີ້ :

1. 15% ຂອງລາຍຮັບລວມ ແມ່ນມອບໃຫ້ນຳໃຊ້ເຂົ້າໃນວຽກງານບໍລິຫານ.
2. 40% ຂອງລາຍຮັບລວມແມ່ນມອບໃຫ້ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງ.
3. 20% ຂອງລາຍຮັບລວມ ແມ່ນມອບພັນທະເຂົ້າລັດ.
4. 20% ຂອງລາຍຮັບລວມ ແມ່ນມອບໃຫ້ກອງທຶນພັດທະນາບ້ານ.
5. 5% ຂອງລາຍຮັບລວມ ແມ່ນມອບໃຫ້ຄະນະ ຄກບ.

ໝວດທີ 07

ບົດບັນຍັດສຸດທ້າຍ

ມາດຕາ 17: ການຈັດຕັ້ງປະຕິບັດ.

ຄະນະກຳມະການຄຸ້ມຄອງຮ່ວມຂັ້ນກຸ່ມບ້ານ ແລະ ຂັ້ນບ້ານເປັນຜູ້ຈັດຕັ້ງປະຕິບັດລະບຽບການສະບັດນີ້.

ມາດຕາ 18 : ຜົນສັກສິດ

ລະບຽບການສະບັບນີ້ມີຜົນສັກສິດນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າເມືອງ ເມືອງບໍລະພາ

ແຂວງ ຄຳມ່ວນ

ເຈົ້າເມືອງ-ເມືອງ ບໍ່ລະ

ຄຳເພົາ ພາຍາເພເພາຮັກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ ຄຳມ່ວນ

ສຳນັກງານປົກຄອງເມືອງບົວລະພາ

ເລກທີ 044/ຈມ.ບພ

ບົວລະພາ, ວັນທີ 21.10.2015

ຂໍ້ຕົກລົງ

ຂອງເຈົ້າເມືອງໆ ບົວລະພາ

ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ

ຂອງຄະນະກຳມະການຄຸ້ມຄອງຮ່ອມຂັ້ນເມືອງ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 03/ ພສຊ ລົງວັນທີ 21 ຕຸລາ2010;
- ອີງຕາມບົດບັນທຶກກອງປະຊຸມປຶກສາຫາລື ແລະ ທາບທາມເພື່ອສ້າງຕັ້ງຄະນະກຳມະການຊີ້ ນຳການຄຸ້ມຄອງຮ່ອມປ່າສະຫງວນແຫ່ງຊາດຫີນໝາມໜໍ່ຂັ້ນເມືອງທີ່ເມືອງບົວລະພາ, ຄັ້ງ ວັນທີ 7-8 ພຶດສະພາ 2015;
- ອີງຕາມບົດບັນທຶກກອງປະຊຸມປຶກສາຫາລື ກ່ຽວກັບ ການກຳນົດພາລະບົດບາດຂອງຄະນະ ກຳມະການຊີ້ນຳການຄຸ້ມຄອງຮ່ອມປ່າສະຫງວນແຫ່ງຊາດຫີນໝາມໜໍ່ຂັ້ນເມືອງ ແລະ ກອງ ເລຂາ ຢູ່ ເມືອງ ນາກາຍ ຄັ້ງວັນທີ 24- 25 ສິງຫາ 2015.
- ອີງຕາມ ກອງປະຊຸມຄັ້ງວັນທີ 24.9.2015 ວ່າດ້ວຍການຄົ້ນຄວ້າສ້າງຕັ້ງຄະນະກຳມະການ ຄຸ້ມຄອງຮ່ອມຂັ້ນເມືອງ.

ເຈົ້າເມືອງໆບໍລະພາ ອອກຂໍ້ຕົກລົງ:

ມາດຕາ 01: ເຫັນດີແຕ່ງຕັ້ງຄະນະກຳມະການຊີ້ນຳການຄຸ້ມຄອງຮ່ອມປ່າສະຫງວນແຫ່ງຊາດຫີນໝາມໝໍ່ຂັ້ນເມືອງ ຊຶ່ງປະກອບມີ:

1. ທ່ານ ຄັນທະລັງສີ ໄຊຍະລາດ ຮອງເຈົ້າເມືອງໆບໍລະພາ ເປັນປະທານ
2. ທ່ານ ຫົວໜ້າຫ້ອງການ ຊສ ເມືອງບໍລະພາ ຮອງປະທານ
3. ທ່ານ ຫົວໜ້າຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງບໍລະພາຮອງປະທານ
4. ທ່ານ ຫົວໜ້າຫ້ອງວ່າການປົກຄອງ ເມືອງບໍລະພາ ເປັນຄະນະ
5. ທ່ານ ຫົວໜ້າກອງບັນຊາການ ປກຊ ເມືອງບໍລະພາ ເປັນຄະນະ
6. ທ່ານ ຫົວໜ້າກອງບັນຊາການ ປກສ ເມືອງບໍລະພາ ເປັນຄະນະ
7. ທ່ານ ຫົວໜ້າຫ້ອງການ ແຜນການ ແລະ ການລົງທຶນ ເມືອງ ເປັນຄະນະ
8. ທ່ານ ຫົວໜ້າຫ້ອງການ ພັດທະນາຊົນນະບົດ ເມືອງບໍລະພາ ເປັນຄະນະ
9. ທ່ານ ຫົວໜ້າຫ້ອງການ ສະຫະພັນແມ່ຍິງ ເມືອງບໍລະພາ ເປັນຄະນະ
10. ທ່ານ ຫົວໜ້າຫ້ອງການ ຖ ອ ທ ເມືອງບໍລະພາ ເປັນຄະນະ
11. ທ່ານ ຫົວໜ້າຫ້ອງການ ແນວລາວສ້າງຊາດ ເມືອງບໍລະພາ ເປັນຄະນະ
12. ທ່ານ ຫົວໜ້າຫ້ອງການພາຍໃນ ເມືອງບໍລະພາ ເປັນຄະນະ
13. ທ່ານ ຫົວໜ້າຫ້ອງການໂຄສະນາອົບຮົມ ເມືອງບໍລະພາ ເປັນຄະນະ
14. ທ່ານ ຫົວໜ້າຄະນະກຳມະການຄຸ້ມຄອງຮ່ອມປ່າສະຫງວນ ແຫ່ງຊາດຫີນໝາມໝໍ່ຂັ້ນກຸ່ມບ້ານ (ກຸ່ມຫນອງມ້າ, ກຸ່ມຫນອງປິງ, ກຸ່ມຂະຍູ້, ກຸ່ມຫລັງຄັງ ແລະ ກຸ່ມບ້ານດຸ) ເປັນຄະນະ

ມາດຕາ 02. ຂອບເຂດສິດ , ໜ້າທີ່ , ຫຼັກການ ແລະ ວິທີເຮັດວຽກ.

- **ຂອບເຂດສິດ , ໜ້າທີ່**
- **ຂອບເຂດສິດ**
  - ປັບປຸງ, ຊັບຊ້ອນ ແລະ ຍົກຍ້າຍໜ້າທີ່ ຂອງ ຄະນະກຳມະ ການຄຸ້ມຄອງຮ່ອມຂັ້ນກຸ່ມ ບ້ານ, ຂັ້ນບ້ານ ແລະ ໜ່ວຍງານລາດຕະເວນບ້ານ.

- ຈັດກອງປະຊຸມ ເພື່ອຄົ້ນຄວ້າພິຈາລະນາຮັບຮອງແຜນ ການປະຈຳປີ, ປະຈຳ 6 ເດືອນ (ສາມັນ ແລະ ວິສາ ມັນ) ກ່ຽວກັບການພັດທະນາ ແລະ ປົກປັກຮັກສາປ່າສະຫງວນແຫ່ງຊາດຫີນໝາມໜໍ່;
- ຮັບຮອງຜົນການສຳຫລວດ, ການກຳນົດປັກຫຼັກໝາຍ, ການແບ່ງເຂດຍ່ອຍ ແລະ ກົດລະບຽບທີ່ກ່ຽວຂ້ອງໃນປ່າສະຫງວນແຫ່ງຊາດຫີນໝາມໜໍ່ (ເຂດຫ່ວງຫ້າມເດັດຂາດ ແລະ ເຂດຄຸ້ມຄອງນຳໃຊ້);
- ໃຫ້ທິດຊີ້ນຳແກ້ໄຂບັນຫາປະກົດການຫຍໍ້ທໍ້ ແລະ ການລະເມີດກົດໝາຍ, ລະບຽບການທີ່ກ່ຽວ ຂ້ອງໃນການຄຸ້ມຄອງປ່າສະຫງວນແຫ່ງຊາດຫີນໝາມໜໍ່;
- ປະກອບຄຳເຫັນກ່ຽວກັບການຂະຫຍາຍຂອບເຂດປ່າສະຫງວນແຫ່ງຊາດຫີນໝາມໜໍ່;
- ເຂົ້າຮ່ວມໂຄງປະກອບຄະນະກຳມະການຄຸ້ມຄອງມໍລະດົກທາງທຳມະຊາດໂລກ ແລະ ອາຊຽນ;
- ແລກປ່ຽນຂໍ້ມູນ-ຂ່າວສານ, ຖອດຖອນບົດຮຽນໃນການຄຸ້ມຄອງ, ປົກປັກຮັກສາປ່າສະຫງວນແຫ່ງຊາດຫີນໝາມໜໍ່ ກັບ ອຸທິຍານແຫ່ງຊາດ ຟອງຍາ-ແກບັ້ງ ຂອງ ສສ ຫວຽດນາມ ແລະ ເຂດພື້ນທີ່ອະນຸລັກທຳມະຊາດແຫ່ງອື່ນໆ;
- ເຂົ້າຮ່ວມຂະບວນການຄົ້ນຄ້ວາ, ພິຈາລະນາ ແລະ ນຳສະເໜີໃນການຂໍອະນຸມັດ ຫຼື ໂຈະການສຳປະທານພື້ນທີ່ດິນຂອງລັດເພື່ອດຳເນີນກິດຈະການການທ່ອງທ່ຽວແບບອະນຸລັກ ແລະ ໂຄງການພັດທະນາຕ່າງໆໃນເຂດປ່າສະຫງວນແຫ່ງຊາດຫີນໝາມໜໍ່;
- ເຊັນຮັບຮອງບັນດາກິດຈະກຳທີ່ກ່ຽວຂ້ອງກັບການປະຕິບັດການຄຸ້ມຄອງ ແລະ ອະນຸລັກຊີວະນາໆພັນໃນເຂດປ່າສະຫງວນແຫ່ງຊາດຫີນໝາມໜໍ່ຕາມການສະເໜີຂອງຄະນະກຳມະການຄຸ້ມຄອງຮ່ວມຂັ້ນກຸ່ມບ້ານ ແລະ ຂັ້ນບ້ານ (ກຄຂ,ກຄບ);
- ອອກຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ, ຄຳແນະນຳວິຊາການຕ່າງໆ ກ່ຽວກັບວຽກງານການຄຸ້ມຄອງປ່າສະຫງວນຫີນໝາມໜໍ່ ລົງຫາ ຄະນະກຳມະການຄຸ້ມຄອງຮ່ວມຂັ້ນເຂດ ແລະ ຂັ້ນບ້ານ;

- ພົວພັນເອົານິຕິກຳທີ່ຈຳເປັນຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງທີ່ພົວພັນເຖິງບັນຫາ ຫຼື ຂໍ້ຂັດແຍ້ງທີ່ພົວພັນກັບຊັບພະຍາກອນທຳມະຊາດຢູ່ເຂດປ່າສະຫງວນຫີນໜາມໜໍ່;
- ຄົ້ນຄວ້າ ແລະ ນຳສະເໜີຫາເຈົ້າເມືອງ, ເຈົ້າແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອປະຕິບັດນະໂຍບາຍຕ່າງໆຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕ່າງໆ ທີ່ມີຜົນງານດີເດັ່ນ;
- ເຂົ້າຮ່ວມກອງປະຊຸມລະດັບທ້ອງຖິ່ນ, ສູນກາງ ແລະ ຕ່າງປະເທດທີ່ພົວພັນກັບວຽກງານປ່າສະຫງວນແຫ່ງຊາດຫີນໜາມໜໍ່ຕາມການສະເໜີຂອງພາກສ່ວນທີ່ກ່ຽວຂ້ອງ.

- **ໜ້າທີ່ຄະນະ ຄກມ**
  - ຊີ້ນຳ, ກວດກາຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກການຄຸ້ມຄອງເຂດປ່າສະຫງວນແຫ່ງຊາດຫີນໜາມໜໍ່ຂອງຄະນະກຳມະການຄຸ້ມຄອງຮ່ວມຂັ້ນເຂດ ແລະ ຂັ້ນບ້ານ;
  - ຊຸກຍູ້ ແລະ ສົ່ງເສີມ ການສ້າງຄວາມອາດສາມາດໃຫ້ແກ່ກອງເລຂານຸການ, ພະນັກງານວິຊາການຂອງເມືອງ;
  - ລົງຊຸກຍູ້ຄະນະກຳມະການຄຸ້ມຄອງຮ່ວມຂັ້ນກຸ່ມບ້ານ ແລະ ຂັ້ນບ້ານ ແລະ ປະຊາຊົນບ້ານເປົ້າ ໝາຍ;
  - ຊີ້ນຳ ຫຼື ເຂົ້າຮ່ວມ ຫຼື ເປັນປະທານ ແລະ ປະກອບຄຳເຫັນຢູ່ກອງປະຊຸມໃນການສ້າງ ແລະ ປັບປຸງຍຸດທະສາດການຄຸ້ມຄອງຮ່ວມປະຈຳ 5 ປີ, ແຜນການປະຈຳປີ, ປະຈຳໄຕມາດ ແລະ ນິຕິກຳຕ່າງໆ;
  - ສ້າງຈິດສຳນຶກແກ່ມວນຊົນໃນການອະນຸຮັກ ແລະ ຄຸ້ມຄອງປ່າສະຫງວນແຫ່ງຊາດຫີນໜາມໜໍ່ໃຫ້ມີຄວາມຍືນຍົງ;
  - ເຂົ້າຮ່ວມໃນການທົບທວນ ບົດລາຍງານການສຶກສາຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການຕ່າງໆທີ່ຈະດຳເນີນໃນຂອບເຂດປ່າສະຫງວນຫີນໜາມໜໍ່ ແລະ ຮ່ວມຮັບຟັງຜົນການຄົ້ນຄວ້າວິໄຈຂອງຄະນະສຶກສາຄົ້ນຄວ້າຈາກພາຍໃນ ແລະ ຕ່າງປະເທດ;

- ພິຈາລະນາ ແລະ ຮັບຮອງບົດສະຫລຸບລາຍງານທາງວິຊາການ ແລະ ງົບປະມານປະຈຳ 3 ເດືອນ, 6 ເດືອນ ແລະ ປະຈຳປີ.

- **ຫຼັກການ ແລະ ວິທີເຮັດວຽກ**

  - **ຫຼັກການ**

ຄະນະກຳມະການຊີ້ນຳການຄຸ້ມຄອງຮ່ວມປ່າສະຫງວນແຫ່ງຊາດຫີນໝາມໝໍ່ຂັ້ນເມືອງປະຕິບັດຫຼັກ ການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສົມທົບກັບການປະຕິ ບັດລະບອບຫົວໜ້າດຽວ, ມີການແບ່ງງານກັນລະອຽດ ແລະ ຈະແຈ້ງ.

  - **ວິທີເຮັດວຽກ**

- ການປະຕິບັດວຽກຕົວຈິງເວລາຫົວໜ້າຫ້ອງການບໍ່ຢູ່ຕ້ອງໄດ້ມອບໃຫ້ຄະນະເຮັດວຽກແທນ
- ປະທານຄະນະກຳມະການຊີ້ນຳການຄຸ້ມຄອງຮ່ວມຂັ້ນເມືອງມີຄວາມຮັບຜິດຊອບໂດຍກົງຕໍ່ອຳນາດການປົກຄອງເມືອງ, ອຳນາດການປົກຄອງແຂວງ ແລະ ສູນກາງກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງກ່ຽວກັບການຊີ້ນຳການຄຸ້ມຄອງປ່າສະຫງວນແຫ່ງຊາດຫີນໝາມໝໍ່;
- ປະທານເປັນຜູ້ລົງລາຍເຊັນບັນດາເອກະສານຕ່າງໆ, ໃນກໍລະນີຕິດຂັດ ຫຼື ໄປເຄື່ອນໄຫວວຽກງານທາງໄກແມ່ນໃຫ້ມອບສິດຊົ່ວຄາວໃຫ້ຮອງຜູ້ໃດຜູ້ຫນຶ່ງດຳເນີນການແທນ ແລະ ໃຫ້ລາຍງານວຽກຕ່າງໆໃຫ້ປະທານເມື່ອກັບຄືນມາປະຈຳການ
- ການເຄື່ອນໄຫວຂອງຄະນະກຳມະການຊີ້ນຳການຄຸ້ມຄອງຮ່ວມປ່າສະຫງວນແຫ່ງຊາດຫີນໝາມໝໍ່ຂັ້ນເມືອງແມ່ນບົນພື້ນຖານແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ;
- ມີການປະສານສົບທົບວຽກງານກັບຂະແໜງການຕ່າງໆອ້ອມຂ້າງເມືອງ, ແຂວງ, ສູນກາງ ແລະ ຜູ້ມີສ່ວນຮ່ວມຕ່າງໆ;
- ປະຕິບັດວຽກປະຊຸມສ່ອງແສງພາຍໃນປະຈຳເດືອນຢ່າງເປັນປົກກະຕິ.

ມາດຕາ 03: ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 279/ຈມ.ບພ ລົງວັນທີ 08 ທັນວາ 2015 ແລະ ມີຜົນສັກສິດນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າເມືອງໆບໍລະພາ

ຄຳເພົ້າ ທອງເພພາຮັກ

<u>ບ່ອນສົ່ງ:</u>

- ຫ້ອງວ່າການປົກຄອງເມືອງບໍລະພາ 1 ສະບັບ
- ຄະນະກຳມະການຊີ້ນຳຮ່ວມຂັ້ນເມືອງ ທ່ານລະ 1 ສະບັບ
- ຄະນະກຳມະການຄຸ້ມຄອງຮ່ວມຂັ້ນເຂດໆລະ 1 ສະບັບ
- ຄະນະກຳມະການຄຸ້ມຄອງຮ່ວມຂັ້ນບ້ານໆລະ 1 ສະບັບ
- ຂະແໜງຄຸ້ມຄອງ ຊສ ແຂວງ 1 ສະບັບ
- ພະແນກ ຊສ ແຂວງ 1 ສະບັບ
- ກົມຄຸ້ມຄອງຊັບພະຍາກອນປ່າໄມ້ 1 ສະບັບ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເມືອງປົວລະພາ

ຄະນະກຳມະການຄຸ້ມຄອງຮ່ວມ

ເລກທີ 042/ຄຄມ

ປົວລະພາ,ວັນທີ 21.10.2015

ຂໍ້ຕົກລົງ

ຂອງປະທານຄະນະກຳມະການຊີ້ການຄຸ້ມຄອງຮ່ວມ

ປ່າສະຫງວນແຫ່ງຊາດຫີນໝາມໜໍ່ຂັ້ນເມືອງ

ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກອງເລຂານຸການ ຄກມ

- ອີງຕາມບົດບັນທຶກກອງປະຊຸມປຶກສາຫາລື ແລະ ທາບທາມ ເພື່ອສ້າງຕັ້ງຄະນະກຳມະການຊີ້ນຳການຄຸ້ມຄອງຮ່ວມປ່າສະຫງວນແຫ່ງຊາດຫີນໝາມໜໍ່ຂັ້ນເມືອງ ທີ່ເມືອງປົວລະພາ ຄັ້ງວັນທີ 7-8 ພຶດສະພາ 2015;
- ອີງຕາມ ບົດບັນທຶກກອງປະຊຸມປຶກສາຫາລືກ່ຽວກັບການກຳນົດພາລະບົດບາດຂອງຄະນະກຳມະການຊີ້ນຳ ການຄຸ້ມຄອງຮ່ວມປ່າສະຫງວນແຫ່ງຊາດຫີນໝາມໜໍ່ ແລະ ກອງເລຂານຸການ ຢູ່ ເມືອງ ນາກາຍ ຄັ້ງວັນທີ 26-25 ສິງຫາ 2015.
- ອີງຕາມກອງປະຊຸມຄັ້ງວັນທີ 24.9.2015 ວ່າດ້ວຍການຄົ້ນຄວ້າສ້າງຕັ້ງຄະນະກຳມະການຄຸ້ມຄອງຮ່ວມຂັ້ນເມືອງ

ປະທານ ຄະນະກຳມະການຊີ້ນຳ ການຄຸ້ມຄອງຮ່ວມ
ປ່າສະຫງວນແຫ່ງຊາດຫີນໝາມໝໍ່ ຂັ້ນເມືອງ ອອກຂໍ້ຕົກລົງ:

ມາດຕາ 01: ເຫັນດີແຕ່ງຕັ້ງຄະນະກອງເລຂານຸການ ແລະ ປະຈຳການ ຊຶ່ງປະກອບມີ:

1. ທ່ານ ບົວແກ້ວ ສຸລິວົງ ຮອງຫົວໜ້າຫ້ອງການຊສເມືອງ ເປັນຫົວໜ້າ
2. ທ່ານ ຄຳໃຜ ໄຊລາວັນ ຮອງຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນຮອງ
3. ທ່ານ ພອນວິໄລ ວົງໄຊຍາ ຫົວໜ້າໜ່ວຍງານຊັບພະຍາກອນປ່າໄມ້ແລະນ້ຳ ເປັນຄະນະ
4. ທ່ານ ສີປະເສີດ ຄຳສຸກຖານວົງ ຫົວໜ້າໜ່ວຍງານກວດກາປ່າໄມ້ ເປັນຄະນະ
5. ທ່ານ ສີພະນິມ ຮອງຫົວໜ້າໜ່ວຍງານບໍລິຫານຫ້ອງການ ຊສ ເປັນຄະນະ
6. ທ່ານ ຄຳພູ ບຸດສາລີ ຮອງຫົວໜ້າໜ່ວຍງານບໍລິຫານຫ້ອງການ ກປມ ເປັນຄະນະ
7. ທ່ານ ແມັກ ຫົວໜ້າ ຈຸງານຖານຂໍ້ມູນ ເປັນຄະນະ

ມາດຕາ 02: ວ່າດ້ວຍ ຂອບເຂດສິດ ແລະ ໜ້າທີ່ ຂອງກອງເລຂານຸການ

- **ຂອບເຂດສິດ**
  - ພົວພັນປະສານງານ ແລະ ພົບປະແລກປ່ຽນຂໍ້ມູນ-ຂ່າວສານກັບທຸກພາກສ່ວນທີ່ກ່ຽວຂ້ອງຂັ້ນເມືອງ ແລະ ຂັ້ນແຂວງ;
  - ນຳສະເໜີ ແລະ ລາຍງານບັນຫາຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງປ່າສະຫງວນແຫ່ງຊາດຫີນໝາມໝໍ່ຕໍ່ຄະນະກຳມະການຄຸ້ມຄອງຮ່ວມຂັ້ນເມືອງ ແລະ ຂັ້ນແຂວງ ເພື່ອພິຈາລະນາໃຫ້ທິດຊີ້ນຳ;
  - ເປັນເຈົ້າພາບຈັດກອງປະຊຸມປະຈຳ 3 ເດືອນ, 6 ເດືອນ ແລະ ປະຈຳປີຂອງຄະນະກຳມະການຄຸ້ມຄອງຮ່ວມຂັ້ນເມືອງ.
  - ເຂົ້າຮ່ວມກອງປະຊຸມຂອງໜ່ວຍງານວິຊາການທີ່ຈັດຂຶ້ນແຕ່ລະຄັ້ງ.
- **ໜ້າທີ່**
  - ເປັນເສນາທິການເພື່ອຊ່ວຍວຽກຄະນະກຳມະການຄຸ້ມຄອງຮ່ວມຂັ້ນເມືອງ ແລະ ປະສານງານ ກັບ ຂັ້ນບ້ານ, ຂັ້ນເຂດ, ຂັ້ນເມືອງ, ຂັ້ນແຂວງ ແລະ ຄູ່ຮ່ວມງານຕ່າງໆ.
  - ສັງລວມຂໍ້ມູນ ແລະ ປົດລາຍງານຕ່າງໆທີ່ໄດ້ຈາກຄະນະກຳມະການຊີ້ນຳການຄຸ້ມຄອງຮ່ວມຂັ້ນເຂດ, ຂັ້ນບ້ານ ແລະ ໜ່ວຍງານວິຊາການຕ່າງໆທີ່ນຳມາສະເໜີເພື່ອລາຍງານຕໍ່ໃຫ້ຄະນະກຳມະການຊີ້ນຳຮ່ວມຂັ້ນເມືອງ ແລະ ຂັ້ນເທິງ.

- ກະກຽມເອກະສານຕ່າງໆເພື່ອຂໍອະນຸມັດໃນການຈັດກອງປະຊຸມຂອງຄະນະກຳມະການຊີ້ນຳການຄຸ້ມຄອງຮ່ອມຂັ້ນເມືອງ.
- ສັງລວມເຮັດປົດບັນທຶກກອງປະຊຸມຂອງຂອງຄະນະກຳມະການຊີ້ນຳການຄຸ້ມຄອງຮ່ອມຂັ້ນເມືອງທີ່ຈັດຂຶ້ນ ແຕ່ລະຄັ້ງ ແລະ ເຮັດປົດສະຫລຸບລາຍງານປະຈຳໄຕມາດ, ປະຈຳ 6 ເດືອນ ແລະ ປະຈຳປີ.
- ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຄະນະກຳມະການຊີ້ນຳການຄຸ້ມຄອງຮ່ອມຂັ້ນເມືອງ.

- **ຫຼັກການ ແລະ ວິທີເຮັດວຽກ**

  ➢ **ຫຼັກການ**

  ຄະນະກອງເລຂານຸການຄະນະກຳມະການຊີ້ນຳການຄຸ້ມຄອງຮ່ອມປ່າສະຫງວນແຫ່ງຊາດຫີນໝາມໜໍ່ຂັ້ນເມືອງປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ສົມທົບກັບການປະຕິບັດລະບອບຫົວໜ້າດຽວ, ມີການແບ່ງງານກັນລະອຽດ ແລະ ຈະແຈ້ງ.

  ➢ **ວິທີເຮັດວຽກ**

- ຫົວໜ້າກອງເລຂານຸການຄະນະກຳມະການຊີ້ນຳການຄຸ້ມຄອງຮ່ອມປ່າສະຫວນແຫ່ງຊາດຫີນໝາມໜໍ່ຂັ້ນມືອງເຮັດວຽກເຕັມເວລາຊຶ່ງມີບ່ອນປະຈຳການຢູ່ຫ້ອງການປ່າສະຫງວນຢູ່ບ້ານ ທ່າກະຈັນ, ເມືອງປົວລະພາ.
- ຫົວໜ້າກອງເລຂານຸການເປັນຜູ້ເປັນຜູ້ກວດກາບັນດາເອກະສານຕ່າງໆກ່ອນທີ່ຈະນຳສົ່ງໃຫ້ຄະນະກຳມະການຊີ້ນຳການຄຸ້ມຄອງຮ່ອມຂັ້ນເມືອງ ມີຄຳເຫັນ ຫຼື ຮັບຮອງ;
- ຄະນະກອງເລຂາຕ້ອງແບ່ງວຽກໜ້າທີ່ຮັບຜິດຊອບລະອຽດເຊັ່ນ: ພະນັກງານເກັບມ້ຽນເອກະສານ, ພະນັກງານການເງິນ-ການບັນຊີ ແລະ ພະນັກງານຕິດຕາມ-ກວດກາວິຊາການ.
- ມີການປະສານສົບທົບວຽກງານກັບຂະແໜງການຕ່າງໆ ອ້ອມຂ້າງເມືອງ, ແຂວງ, ສູນກາງ ແລະ ຜູ້ມີສ່ວນຮ່ວມຕ່າງໆ.
- ປະຕິບັດວຽກປະຊຸມສ່ອງແສງພາຍໃນ ປະຈຳເດືອນ ຢ່າງເປັນປົກກະຕິ.

ມາດຕາ 03 : ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

(ລາຍເຊັນ)

ປະທານຄະນະກຳມະການຊີ້ນຳການຄຸ້ມຄອງຮ່ວມ

ປ່າສະຫງວນແຫ່ງຊາດຫີນໝາມໜໍ່ຂັ້ນເມືອງ

ແຂວງ ຄຳມ່ວນ
ເມືອງ-ເມືອງ ບໍລະພາ

ຄັນທະວົງສີ ໄຊຍະລາດ

ບ່ອນສົ່ງ:

- ຫ້ອງວ່າການປົກຄອງເມືອງບໍລະພາ 1 ສະບັບ
- ຄະນະກຳມະການຊີ້ນຳຮ່ວມຂັ້ນເມືອງ ທ່ານລະ 1 ສະບັບ
- ຄະນະກຳມະການຄຸ້ມຄອງຮ່ວມຂັ້ນເຂດໆລະ 1 ສະບັບ
- ຄະນະກຳມະການຄຸ້ມຄອງຮ່ວມຂັ້ນບ້ານໆລະ 1 ສະບັບ
- ພະແນກ ຊສ ແຂວງ 1 ສະບັບ
- ກົມຄຸ້ມຄອງຊັບພະຍາກອນປ່າໄມ້ 1 ສະບັບ
- ກອງເລຂານຸການ 1 ສະບັບ

Lao People's Democratic Republic
Peace Independence Democracy Unity Prosperity
ᩋᩋᩋᩋᩋ □□□ ᩈᩈᩈᩈᩈ

Co- Management Regulation By-Law

and

HNN NPA Protection at District, Village Cluster and Village Level

Co-management Committee
Boualapha District, May 2015

Lao People's Democratic Republic

Peace Independence Democracy Unity and Prosperity

Khammouane Province

Boualapha District

No: 01/DG. BLP

Boualapha, Date: 07/05/2015

Co- Management Regulation By-Law and
HNN NPA Protection at Village Cluster and Village Level

- Referring to the Forestry Law, No: 06/NA, Dated 24/12/2007
- Referring to the Wildlife and Aquatic Law, No: 07/NA; Dated 24/12/2007
- Referring to the consultation workshop at village, village cluster, district and provincial level on regulation by-law on protecting and managing Hin Nam No National Protected Area held from May-October 2014
- Referring to the minutes of meeting held at Provincial Office of Agriculture and Forestry on September 30, 2014

To ensure the existing natural resources, wildlife, aquatic, biodiversity and environment of the HNN-NPA to be managed with protection, restoration and expansion of the existing flora and fauna species for sustainable use while encouraging the local people and stakeholders to be involved to actively protect the forest, forest land, wildlife, aquatic, biodiversity and environment in the area in line with the Lao Government Policy, the Governance, context of forestry law, wildlife and aquatic law and National Protected Area Management Regulations.

The District Governor of Boualapha District Agreed to Issue the Co-management by-law as follows:

Section 01
General Principle

Article 01: Objectives

The objectives of the co-management regulation by-law on HNN NPA Protection with focus on:

1. Regulations, principles and measurements for the use and management of natural resources such as forest, land use, wildlife and aquatic and NTFP; identifying the role and responsibility of local people to sustain the HNN NPA.
2. To encourage the local people who are connected to forest, natural resources, wildlife and aquatic to show ownership to manage the HNN NPA; protection and rehabilitation to increase the natural resources in the area for sustainable use. To raise the awareness of local people to be responsible with regard to the HNN NPA management. In addition, to ensure the existing natural resources of each village in the area for which they are responsible to remain fully intact with regard to biodiversity, ecosystems and natural resources which are of national, regional and global importance.
3. To endorse the rights and responsibilities of the local people on traditional natural resource use in line with regulations.
4. To disseminate the HNN NPA Co-management Regulation by-law to all stakeholders while protecting the environment and developing the livelihoods of local people.

Article 02: Scope of Application

This co-management regulation by-law will be implemented based on Article 1 by the HNN NPA management.

Article 03: Management and Conservation of Wildlife and Aquatic, Biodiversity and Environmental Resources;

Individuals, government agencies and the private sector have the responsibility to protect the natural resources. This is especially important for

the forest, wildlife/aquatic, biodiversity and environmental resources of the HNN NPA while enforcing the laws and regulations and to act against the negative impact on the forest, wildlife/aquatic, biodiversity and environmental resources inside the park.

Article 04: Terminology

1. The HNN NPA is established under the Prime Minister Decree, No 164/PM; dated 29/10/1993. It has 82,000 ha and is located in Boualapha District, Khammouane Province, Laos.
2. Total Protected Zone: TPZ is identified to be the wildlife's habitat. It consists of two areas: Nam-Khoum Wildlife Conservation Area (3,600 ha) and Khoun Ka Ang Wildlife Conservation Area (3,800 ha).
3. Seasonal Protected Zone: SPZ is identified to be the wildlife's habitat based on the season: Kouan Nong Area, Nong boun, Kouan Phaya, Phanungtok and Japai. These areas cover 13,888 ha and they are conserved during July 1 to October 30 of each year.
4. Tourism Protected Zone: Tourism Protected Zone is identified to be the tourism sites which consist of three areas: Tham Nam Lord Xe Ban Fai Cave in Nongping village, Kouan Ke in Du village and Phou Cheaung in Nongboau village.
5. Controlled Use Zone: CUZ is identified to be the areas located in the HHN NPA which are different from the identified zones above.
6. Wildlife-aquatic resources are all kinds of fauna that grow in the natural sites. They consist of mammals, amphibian, water animal, birds and insects.
7. The types of wildlife and Aquatic resources are listed in 01, 02, 03 (attachment).
8. Hunting the wildlife and aquatic resources means to catch, shoot, fish, kill, trap, bomb, poison and catch fish by using electric devices.
9. NTFP is the natural products such as: cane, root, flower, skin, fruit, flower, oil, honey, mushroom, flora, short-plants and others.
10. Illegal activity is any activity that occurred in HNN NPA without permission or approval.
11. VCMC is a committee board which works for HNN NPA co-management at village level.

12. VCCMC is a committee board which works for HNN NPA co-management at village cluster level
13. Village patrolling unit is a unit of village rangers that patrol the HNN NPA. They focus especially on monitoring and preventing of threats, fires and illegal activities that negatively affect the HNN NPA.

Section 02
The HNN NPA Management and Wildlife/Aquatic Protection

Article 05: The HNN NPA Management and Protection

1. **NPA Management:**
   NPA management consists of mutual agreed activities that are related to protected area management such as research, documentary, tourism development and infrastructure development.

2. **NPA Protection:**
   NPA management aims to protect the forest to guarantee the objective for flora and fauna and forest ecosystem conservation and to protect the historic/cultural-, tourism-, environment-, education- and scientific research values. The HNN NPA is divided into four zones:
   Total Protected Zone: In the TPZ it is prohibited to do activities such as: slash and burn, deforestation, mining extraction, wildlife hunting, NTFP collection, agricultural cultivation, move natural resources, move flora and fauna, housing and infrastructure development projects. However, the village rangers or NPA authorities can implement their work on patrolling and protecting the HNN NPA.
   Seasonal Protected Zone: In this zone it is allowed to use the natural resources from October 1 to May 30
   Tourism Protected Zone: This zone is only for tourism arrangement. The activities in this zone must connect to tourism.
   Controlled Use Zone: The **C**UZ is located outside of the TPZ of HNN NPA. The CUZ is used as follows:

- NTFP collection
- Use of wood within family and house construction based on the approval of regulations from village authority, district governor and DONRE.

- Hunting wildlife/aquatic for family consumption based on the season.

Article 06: Wildlife/Aquatic Management

The Wildlife/Aquatic resources that are in the HNN NPA are divided into three categories as follows:

- Category 1: Total Protected Wildlife/Aquatic
- Category 2: Controlled Use Wildlife/Aquatic
- Category 3: General Wildlife/Aquatic

Article 07: Wildlife/Aquatic Use

- Total Protected Wildlife/Aquatic is a wildlife and aquatic resource prohibited to be used in the HNN NPA, but can be used after approval and permission from high level (Khan therng) for the purpose of tourism or scientific research.
- Controlled Use Wildlife/Aquatic is used for consumption within the family and the controlled use Wildlife/Aquatic can be used by permission from high level (Khan therng) based on the season. For example: October 1 to May 30.
- General wildlife/aquatic resources are used based on the local tradition but it is not allowed to hunt them in an endangered way. In case the wildlife/aquatic resources are used for trading purposes this should be approved by the respective authority responsible for the law (Wildlife/Aquatic Law; No 07/NA; dated 24/December/2007).

Section 03
Institutional Framework, Conditions, Rights and Duty of VCMC & VCCMC

Article 08: Conditions, Institutional Framework and Duration of VCMC & VCCMC

1. Institutional Framework and Duration of VCCMC :

1.1. The VCCMC boards consist of Chief of VCCMC (1 person), Vice of VCCMC (1 person) and are based on the voting result.

1.2. Secretary or Vice secretary of Village Cluster is appointed to be the VCCMC board automatically but he/she must attend the election and voting meeting.
1.3. Deputy of VCCMC boards must be elected at each village cluster level.
1.4. Duration of VCCMC is 3 years.

2. Institutional Framework and Duration of VCMC:

2.1. The VCMC boards consist of Chief of VCMC (1 person), vice of VCMC (1 person) and are based on the voting result.
2.2. Chief of village or Vice of village
2.3. Representative of village ranger
2.4. Representative of village Women Union
2.5. Representative from NTFP and tourism providers groups
2.6. The duration of VCMC is 3 years

Article 09: Rights and Duty of VCMC & VCCMC

1. Rights and Duty of VCCMC

1.1 Rights:

1.1.1 The VCCMC has the right to propose to conduct the discussion meeting on co-management at village cluster level.
1.1.2 The VCCMC has the right to attend the technical workshop, trainings that are provided by the Project or district authority and they can provide inputs.
1.1.3 The VCCMC has the right to cooperate with HNN NPA staff to arrest the violator and fine him/her based on the regulation by-law and send the violator to district level.
1.1.4 The VCCMC has the right to terminate illegal activities such as NTFP collections, wildlife and aquatic hunting and land clearance for agricultural cultivation purposes.

1.2 Duty:

1.2.1 To assist the district authority on management and monitoring of all the activities related to HNN NPA.
1.2.2 To disseminate the documents, agreements, regulations on HNN NPA management to villagers in the area for which they are responsible.
1.2.3 To prevent the forest fires.

1.2.4 To protect against the invaders inside the area for which they are responsible.

1.2.5 To protect the sustainable natural resource, forest resource, land, wildlife and aquatic species.

1.2.6 To inspect and arrest the external and internal people who enter to the HNN NPA without permission or do illegal activities.

1.2.7 To summarize and report to the district authority (Normal and Abnormal)

1.2.8 To cooperate and facilitate the implementation of activities related to HNN NPA management.

2. Right and Duty of VCMC

2.1 Right:

2.1.1 The VCMC has the right to propose to conduct the discussion meeting on co-management at village level.

2.1.2 The VCMC has the right to attend the technical workshop, trainings that are provided by the Project or district authority and they are able to provide inputs.

2.1.3 The VCMC has the right to cooperate with VCCMC and HNN NPA staff to arrest the violator and fine him/her based on the regulation by-law and send the violator to district level due to be judged based on the Law.

2.1.4 The VCMC has the right to terminate illegal NTFP collections, wildlife and aquatic hunting and land clearance for agricultural cultivation as it is prohibited in the co-management regulation by-law. They have the full rights to report all activity happening at village level to the VCCMC at village cluster within 24 hours.

2.2 Duty

